# ພາກທີ 1: ເງື່ອນໄຂ ຂອງການຈັດຕັ້ງກຸ່ມ

## ກຸ່ມຕ້ອງມີເງື່ອນໄຂດັ່ງນີ້:

- ໃນບ້ານ, ຕ້ອງເລີ່ມມີກິດຈະກຳທີ່ເປັນຕົວແບບ ຫຼື ເຮັດໄດ້ໃນລະດັບທີ່ດີທີ່ດຳເນີນມາບໍ່ຕ່ຳກ່ວາ 2 ປີ ຂຶ້ນໄປ, ເຊິ່ງມີການຍອມຮັບ ແລະ ຢັ້ງຢືນຈາກຫຼາຍພາກສ່ວນ ເຖິງການເປັນຕົວແບບ ທາງດ້ານຄວາມຖືກຕ້ອງດ້ານວິຊາການ ແລະ ຊັດເຈນໃນການສ້າງລາຍຮັບ.
- ມີລາຍຮັບທີ່ຊັດເຈນ ເຊິ່ງສາມາດ ວັດແທກໄດ້, ເຄີຍໄດ້ຮັບໃບຍ້ອງຍໍ ຈາກພາກສ່ວນ ທີ່ກ່ຽວຂ້ອງ ຢ່າງໜ້ອຍ 1 - 2 ຄັ້ງ.
- ເຄີຍເປັນສູນ/ແຫຼ່ງຮຽນຮູ້ (ລວມທັງການທັດສະນະ ແລະ ຖອດຖອນບົດຮຽນ) ໃຫ້ກັບຊຸມຊົນພາຍໃນບ້ານຕົນເອງ, ບ້ານອ້ອມຂ້າງ, ຈາກຕ່າງເມືອງ ຫຼື ຕ່າງແຂວງມາກ່ອນ.
- ຜູ້ເປັນເຈົ້າຂອງກິດຈະການ ຕ້ອງຜ່ານ ການຮຽນຮູ້ຫຼັກສູດການເປັນຄູຝຶກ ຢ່າງໜ້ອຍ 2 ຫຼັກສູດ.
- ມີສະມາຊິກ ທີ່ເປັນເຄືອຄ່າຍ ພາຍໃນບ້ານ ຫຼື ຕ່າງບ້ານບໍ່ຕ່ຳກ່ວາ 10 ຄອບຄົວຂຶ້ນໄປ.
- ມີໂຮງຮຽນ (ອາຄານຮຽນ) ໃນບ້ານຫຼືຄອບຄົວທີ່ຕົນເອງ ມີສ່ວນກ່ຽວຂ້ອງກັບ ອາຄານຮຽນ.

ມີຂໍ້ມູນ ທີ່ໜ້າເຊື່ອຖືມາກ່ອນວ່າ (ສາມາດຢັ້ງຢືນ) ມີຊາວບ້ານຈຳນວນໜຶ່ງ ມີຄວາມສົນໃຈ ທີ່ຈະເຂົ້າຮ່ວມ ກິດຈະກຳທີ່ເປັນຕົວແບບຂອງບ້ານຫຼາຍຂຶ້ນ, ຊັດເຈນຕໍ່ກັບກິດຈະກຳທີ່ຢາກຈະເຮັດ.







# ພາກທີ 2: ຄວາມຮູ້ພື້ນຖານກ່ຽວກັບກຸ່ມ

## ກຸ່ມແມ່ນຫຍັງ ?

- ກຸ່ມແມ່ນ ການລວມຕົວກັນ ຂອງຄົນຫຼາຍຄົນເພື່ອຈຸດປະສົງ ແລະ ເປົ້າໝາຍອັນໃດນຶ່ງ
- ກຸ່ມລວມຕົວກັນ ເພື່ອເປົ້າໝາຍທາງທຸລະກິດ ອັນໃດໜຶ່ງ ເຊິ່ງສ້າງຕັ້ງເປັນ ອົງກອນ ຫຼື ໜ່ວຍງານໃດໜຶ່ງ ທີ່ມີໂຄງຮ່າງການຈັດຕັ້ງ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບ ແລະ ມີແຜນດຳເນີນງານອັນດຽວກັນ. ສະມາຊິກແຕ່ລະຄົນ ຈະປະກອບມີປັດໃຈ ການຜະລິດເປັນຂອງຕົນເອງ ແລະ ຈະນຳໃຊ້ ເພື່ອບັນລຸເປົ້າໝາຍອັນດຽວກັນ.

## ເພື່ອຫຍັງ ຈັດຕັ້ງກຸ່ມ ?

- ເພື່ອເປົ້າໝາຍອັນໃດໜຶ່ງທີ່ຊັດເຈນ ຫຼື ເພື່ອການແກ້ໄຂບັນຫາໃດໜຶ່ງ ທີ່ກຳລັງປະສົບຢູ່.
- ເພື່ອສ້າງພະລັງ ແລະ ສັກກາຍະພາບ ໃຫ້ເປັນອົງກອນທີ່ເຂັ້ມແຂງໃຫ້ສາມາດພັດທະນາໄປຂ້າງໜ້າໄດ້, ແລະ ເພື່ອຮອງຮັບ ໃນການຕໍ່ລອງກັບພາຍນອກ, ໃນດ້ານການຄ້າ, ການເງິນ, ນະໂຍບາຍ, ສະຖາບັນ ແລະ ຄວາມໝັ້ນຄົງ, ຄວາມໜ້າເຊື່ອຖື, ຊື່ສຽງຂອງອົງກອນ.

ເພື່ອຕໍ່ຍອດ ໄປຫາອະນາຄົດ ລະດັບສູງຂຶ້ນໄປຕື່ມ ໃນການດຳເນີນກິດຈະກຳ ຂອງຊຸມຊົນ ເຊິ່ງເອີ້ນວ່າ

**ສະຫະກອນ ຂອງຊຸມຊົນ** (ສະຫະກອນກະເສດ) ທີ່ສາມາດ ສ້າງຜະລິດຕະພັນ ເປັນເອກກະລັກ ຂອງຕົນເອງ (ໜຶ່ງບ້ານ-ໜຶ່ງຜະລິດຕະພັນ, ຫຼື ທີ່ເອີ້ນໂດຍທົ່ວໄປ ວ່າສິນຄ້າ OTOP).

## ພາກທີ 3: ການບໍລິຫານ ຄຸ້ມຄອງກຸ່ມ ທີ່ມີ ປະສິດທິພາບ

ໝາຍເຖິງການເຮັດໃຫ້ ທຸກກິດຈະກຳ ທີ່ສຳຄັນ ໄດ້ຮັບ ການຈັດຕັ້ງປະຕິບັດ ຢ່າງມີແຜນການ, ມີສ່ວນຮ່ວມຈາກ ໝູ່ຄະນະ ແລະ ສະມາຊິກ, ມີຜົນໄດ້ຮັບທີ່ສູງໂດຍການ ນຳໃຊ້ ຊັບພະຍາກອນ ທີ່ມີຢູ່ ເກີດຜົນກະທົບທາງລົບ ໜ້ອຍທີ່ສຸດ.






- ຈຸດປະສົງ / ຄາດໝາຍຂອງກຸ່ມ ໃນໄລຍະສັ້ນ, ໄລຍະຍາວມີຢ່າງໃດ?
- ບົດບາດໜ້າທີ່ ແລະ ຄວາມຮູ້ ຄວາມສາມາດ ຂອງແຕ່ລະຄົນ ໃນໝູ່ຄະນະ ມີອັນໃດ?
- ໜ້າທີ່ ແລະ ພັນທະ ຂອງສະມາຊິກ ຕ້ອງໄດ້ປະຕິບັດອັນໃດ?
- ສະພາບ / ເງື່ອນໄຂ ທ່າແຮງ ແລະ ບັນຫາຂອງກຸ່ມ ມີອັນໃດ? ທາງດ້ານສັງຄົມ, ການຈັດຕັ້ງເຊັ່ນ: ໂຄງສ້າງ ການຈັດຕັ້ງ, ລະບຽບການ, ການແບ່ງໜ້າທີ່...

# ຂະບວນການຈັດຕັ້ງກຸ່ມ ໃນລະດັບບ້ານ

ມີນາ 2013



NTPC
Powering the Future

**ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ**
ພະແນກ ສິ່ງແວດລ້ອມ ແລະ ສັງຄົມ
ໂຄງການ ລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່